

# ສວນເສດຖະກິດກະສິກຳຍືນຍົງ (ສວນໜຸ່ມນ້ອຍ 100 ໂລ)

ທ້າວ ຕຸ້ຍ ຈັນທະບຸນທຳ, ອາຍຸ 26 ປີ, ຈົບຊັ້ນສູງ ສາຂາວິຊາປ່າໄມ້ ທີ່ວິທະຍາໄລກະສິກຳ ແລະ ປ່າໄມ້ພາກເໜືອ, ປັດຈຸບັນຢູ່ບ້ານ ນໍ້າເງິນ, ເມືອງ ວຽງພູຄາ, ແຂວງ ຫຼວງນໍ້າທາ. ເນື່ອງຈາກມີໃຈຮັກທາງດ້ານການປູກຝັງ-ລ້ຽງສັດ, ມີຄວາມຝັນຢາກເປັນຜູ້ປະກອບການໜຸ່ມທີ່ປະສົບຜົນສໍາເລັດທາງດ້ານທຸລະກິດ ແລະ ສາມາດສ້າງລາຍຮັບໃຫ້ແກ່ຄອບຄົວຈຶ່ງເຂົ້າຮ່ວມກິດຈະກຳ.

**ທຶນທີ່ໄດ້ຮັບ:** ໄດ້ຮັບທຶນຈາກໂຄງການໃນປີ 2018 ເປັນມູນຄ່າທັງໝົດແມ່ນ 16,000,000 ກີບ (ສິບຫົກລ້ານກີບ).

**ປະເພດທຸລະກິດ:**
ເຮັດສວນແບບປະສົມປະສານ ປັດຈຸບັນແມ່ນ ລ້ຽງປານິນ, ປາດຸກ, ລ້ຽງໄກ່ພັນໄຂ່, ໄກ່ດູກດຳ ແລະ ຜະລິດລູກໄກ່ນ້ອຍ. ແຜນທີ່ກ□າລັງຈະປະຕິບັດໃນໄວໆນີ້ແມ່ນ ປັບປຸງພື້ນທີ່ປູກຫຍ້າ, ລ້ຽງແບ້, ລ້ຽງໝູ, ປາດຸກ ແລະ ຕົ້ມເຫຼົ້າ ເຊິ່ງເຂົ້າທີ່ນຳໃຊ້ມາຜະລິດເຫຼົ້າແມ່ນຊື້ເຂົ້າໄຮ່ຈາກປະຊາຊົນໃກ້ບ້ານ.

**ການນຳໃຊ້ທຶນ:**
ໃນປີ 2018 ໄດ້ນຳໃຊ້ເຂົ້າໃນການຈັດຊື້ຈັດຈ້າງ, ບຸກເບີກເນື້ອທີ່ສວນ, ຈົກໜອງປາ, ຊື້ອຸປະກອນກໍ່ສ້າງໂຮງເຮືອນ, ຊື້ຫຼັກຮົ້ວ, ລວດໜາມ ແລະ ແນວພັນ ເຊັ່ນ :ໄກ່ໄຂ່, ໄກ່ດູກດຳ, ປາ, ເບ້ຍໄມ້ ແລະ ຄ່າແຮງງານ.

**ເປົ້າໝາຍ:**
ເພີ່ມປະລິມານການຜະລິດໃຫ້ໄດ້ຄື: ໄຂ່ໄກ່ 1,500 ໜ່ວຍ/ມື້, ປາໃຫ້ໄດ້ 2,000 ກິໂລ/ຊຸດ, ໄກ່ຊີ້ນໃຫ້ໄດ້ 200 ໂຕ/ຊຸດ, ເພີ່ມຂະຫຍາຍກິດຈະກຳໃໝ່ເຊັ່ນ: ການຜະລິດລູກກົບ-ລູກປາ ໃຫ້ໄດ້ 100,000 ໂຕ/ຊຸດ, ສົ່ງອອກຂາຍລູກໄກ່ໄປຕ່າງເມືອງ ແລະ ຕ່າງແຂວງໃຫ້ໄດ້ 2,000ໂຕ/ຊຸດ.

**ບັນຫາທີ່ພົບພໍ້:**
ໄລຍະທີ່ຜ່ານມາມີພະຍາດອະຫິວາລະບາດ ໝູຕາຍສິບກວ່າໂຕ, ຊ່ວງໂຄວິດການຂົນສົ່ງຫົວອາຫານຈາກແຂວງຫາແຂວງຕິດຄັດເຮັດໃຫ້ລາຄາຫົວອາຫານແພງຂຶ້ນ. ເນື່ອງຈາກຫຼາຍບັນຫາຈຶ່ງໄດ້ປ່ຽນຮູບແບບການຂາຍ ຈາກການຂາຍສົ່ງແບບບໍ່ມີຈຸດໝາຍ, ມາຊອກຫາລູກຄ້າປະຈຳ, ໄລຫສົດຂາຍ, ໂພສຂາຍໃນເຟສບຸກ. ແຕ່ປີ 2019-2020 ໄດ້ປ່ຽນມາຂາຍແຕ່ໄກ່ ກຳໄລລຸດລົງ ຕົ້ນທຶນເພີ່ມຂຶ້ນຍ້ອນຫົວອາຫານແພງ.

**ລາຍຮັບຍັງບໍ່ໄດ້ຫັກຄ່າໃຊ້ຈ່າຍ:**

- ໃນປີ 2019 ຈາກການຂາຍໄຂ່ 540 ໜ່ວຍ, ໄກ່ຊີ້ນ 20 ກິໂລ, ຂາຍພໍ່ແມ່ພັນໄກ່ດູກດ□າ 3 ຄູ່, ຂາຍໄກ່ຫມົດໄຂ່ 58ໂຕ ລວມລາຍຮັບ 19,220,000 ກີບ.
- ໃນປີ 2020 ມີລາຍຮັບຈາກການຂາຍໄຂ່ໄກ່ 8,947 ໜ່ວຍ, ຂາຍພໍ່-ແມ່ພັນໄກ່ 5 ຄູ່, ຂາຍໄກ່ນ້ອຍ ຈຳນວນ 40 ຄູ່ ແລະ ຂາຍໄກ່ຊີ້ນ 50 ກິໂລ ເປັນມູນຄ່າ 11,857,600 ກີບ.
- ໃນປີ2021 ຂາຍໄກ່ໄຂ່ 200ໂຕ 12,000,000 ກີບ, ໄກ່ດູກດຳ 100ກິໂລ 4,500,000 ກີບ, ປາ 40 ກິໂລ 1,000,000 ກີບ, ຜັກ 400,000 ກີບ, ຂາຍຝຸ່ນຄອກ 400,000 ກີບ, ໄຂ່ໄກ່ 1,152 ມັດ 172,800,000 ກີບ, ລວມລາຍຮັບຫມົດ ປີ 2021 191,100,000 ກີບ. (ລາຍຮັບໃນປີນີ້ຫຼາຍກວ່າແຕ່ລະປີເພາະທ້າຍປີ 2020 ຕົນເອງໄດ້ລົງທຶນສ່ວນຕົວເອົາໄກ່ມາລ້ຽງເພີ່ມອີກ 800 ກວ່າໂຕ).



